ກະຊວງການເງິນ
Ministère des Finances

# ຄູ່ມື ການນຳໃຊ້ ລະບົບ ອີເມວ ຂອງກະຊວງການເງິນ

## https://mail.mof.gov.la

Version.02



ຕິດຕໍ່ປະສານງານ

1. ທ້າວ ຊາຍຍາ ເພັດນິອອນ  ວິຊາການ ເບີໂທ: +856 20 78 956 646
2. ທ້າວ ສະຫວັດດີ ວິໄລແສງ ວິຊາການ ເບີໂທ: +856 20 22 457 772

## ຄຳນຳ

ປະຈຸບັນ, ການສື່ສານທາງເອເລັກໂທຣນິກ ເປັນສິ່ງສຳຄັນໃນການເຮັດວຽກຂອງທຸກໆອົງກອນ ເນື່ອງຈາກການສື່ສານດ້ວຍອີເມວ ແມ່ນສາມາດຢັ້ງຢືນຕົວຕົນ, ຄົ້ນຫາປະຫວັດການຕິດຕໍ່ສື່ສານເຊິ່ງກັນ ແລະ ກັນ ໄດ້ຢ່າງສະດວກ. ພ້ອມນັ້ນ, ອີເມວຍັງໃຊ້ເປັນຫຼັກຖານຢັ້ງຢືນຕົວຕົນ ສຳລັບການສັ່ງຊື້-ຂາຍ ຫຼື ລົງທະບຽນເຂົ້າຮ່ວມກອງປະຊຸມ ແລະ ຕິດຕໍ່ສື່ສານລະຫວ່າງອົງກອນດ້ວຍກັນ. ໂດຍສະເພາະອົງກອນໃດໜຶ່ງທີ່ມີລະບົບອີເມວເປັນຂອງຕົນເອງ ຈະສ້າງຄວາມເຊື່ອຖືໃຫ້ກັບອົງກອນໄດ້ດີກວ່າການໃຊ້ອີເມວທົ່ວໄປ ເຊັ່ນ: @gmail, @yahoo ແລະ ອື່ນໆ.

ສຳລັບຂະແໜງການເງິນ, ໄດ້ສຳເລັດພັດທະນາລະບົບອີເມວຂອງກະຊວງ https://mail.mof.gov.la ເພື່ອໃຫ້ພະນັກງານລັດຖະກອນຂອງຂະແໜງການເງິນ ປະກອບມີ: ບັນດາກົມ, ສູນສະຖິຕິ, ສະຖາບັນເສດຖະກິດ-ການເງິນ, ພະແນກການເງິນແຂວງ, ເມືອງ ແລະ ດ່ານພາສີ ໃນຂອບເຂດທົ່ວປະເທດ ນຳໃຊ້ເປັນທາງການ ຕິດຕໍ່ສື່ສານຫາກັນ ແລະ ຕິດຕໍ່ກັບພາຍນອກ ໄດ້ຢ່າງສະດວກ, ປອດໄພ ແລະ ມີຄວາມເຊື່ອຖືສູງ.

ສົກປີ 2025, ກະຊວງການເງິນໄດ້ທົດລອງນຳໃຊ້ລະບົບອີເມວໃໝ່ ໃນເບື້ອງຕົ້ນໄດ້ກຳນົດ ຈຳນວນຜູ້ໃຊ້ປະມານ 500 ຜູ້ໃຊ້ (Users) ແລະ ກຳນົດເນື້ອທີ່ເກັບຮັກສາອີເມວໃນລະບົບ Mail Server ໃຫ້ຜູ້ລະ 500Mb (ແຜນນາໃຊ້ຕົວຈິງ ໃນຂອບເຂດທົ່ວປະເທດ ທັງໝົດ ຫຼາຍກວ່າ 5,000 ຜູ້ໃຊ້). ສະນັ້ນ, ເພື່ອຄວາມສະດວກໃນການນຳໃຊ້ ແລະ ປະຢັດພື້ນທີ່ຂອງລະບົບ Mail Server ຈຶ່ງແນະນຳ ໃຫ້ບັນດາທ່ານ ນຳໃຊ້ໂປຣແກມ Microsoft Outlook ເພື່ອມີເນື້ອທີ່ພຽງພໍໃນການບັນທຶກຂໍ້ມູນອີເມວໄວ້ໃນຄອມພິວເຕີຂອງຕົນເອງ ແລະ ທັງເປັນການສຳຮອງຂໍ້ມູນອອກຈາກລະບົບ Mail Server ໃຫ້ມີຄວາມປອດໄພ, ມີຄວາມສະດວກຕໍ່ການໃຊ້ງານ ແລະ ເພີ່ມປະສິດທິພາບການເຮັດວຽກຂອງລະບົບອີເມວໃຫ້ດີຂຶ້ນກວ່າເກົ່າ.

ດັ່ງນັ້ນ, ກົມເຕັກໂນໂລຊີຂໍ້ມູນຂ່າວສານການເງິນ ຈຶ່ງສ້າງຄູ່ມືສຳລັບນຳໃຊ້ Microsoft Outlook ໃນການເຊື່ອມຕໍ່ດຶງຂໍ້ມູນອີເມວຈາກລະບົບ Mail Server ຂອງກະຊວງ ໃຫ້ບັນດາທ່ານໄດ້ນາໃຊ້ຕົວຈິງ ເນື່ອງຈາກເປັນໂປຣແກຣມທີ່ມານຳກັບເຄື່ອງຄອມພິວເຕີ ທີ່ນິຍົມນຳໃຊ້ຢ່າງກວ້າງຂວາງ, ມີຄວາມຄົບຖ້ວນທາງດ້ານຄວາມປອດໄພ, ມີລະບົບກວດສອບ Virus, Spam, Phishing. ລວມທັງການເຂົ້າລະຫັດອີເມວແບບ End-to-End ແລະ ຍັງສາມາດໃຊ້ງານໄດ້ທັງຮູບແບບ offline ແລະ Sync ຂໍ້ມູນ Online ເມື່ອມີສັນຍານອິນເຕີເນັດ, ເປັນເຄື່ອງມືການສື່ສານທີ່ມີປະສິດທິພາບ, ມີການແຈ້ງເຕືອນ ເມື່ອໄດ້ຮັບອີເມວ ເຮັດໃຫ້ມີຄວາມສະດວກໃນການເປີດອ່ານ ແລະ ຕອບກັບອີເມວ.

ນອກນັ້ນ, ລະບົບສາມາດບັນທຶກລາຍຊື່ຜູ້ຕິດຕໍ່ ເຊັ່ນ: ຊື່ຜູ້ຕິດຕໍ່, ເບີໂທລະສັບ ຫຼື ຂໍ້ມູນອື່ນໆ ເພື່ອຄວາມສະດວກໃນການສົ່ງອີເມວລະຫວ່າງພາຍໃນອົງກອນ ແລະ ນອກອົງກອນ. ນອກນີ້ ຍັງມີລະບົບບໍລິຫານຈັດການເວລານັດໝາຍລົງໃນປະຕິທິນ ແລະ ວາງແຜນຕາ ຕະລາງນັດໝາຍ ເພື່ອໃຫ້ໂປຣແກມແຈ້ງເຕືອນກ່ອນເວລານັດໝາຍຕົວຈິງ.



ຕິດຕໍ່ປະສານງານ

1. ທ້າວ ຊາຍຍາ ເພັດນີອອນ ວິຊາການ ເບີໂທ: +856 20 78 956 646
2. ທ້າວ ສະຫວັດດີ ວິໄລແສງ ວິຊາການ ເບີໂທ: +856 20 22 457 772

# ສາລະບານ

**I. ການເຂົ້າໃຊ້ອີເມວຂອງກະຊວງດ້ວຍ Web Browser (https://mail.mof.gov.la)** .................................. 4

**1. ວິທີເປີດ Web Browser** .......................................................................................... 4

**2. ການປ່ຽນລະຫັດຜ່ານ ໃຫ້ເປັນລະຫັດສ່ວນຕົວ ຂອງຕົນເອງ** .............................................................. 5

**3. ອັບເດດຂໍ້ມູນສ່ວນຕົວ** ....................................................................................... 6

**II. ການເຊື່ອມ Microsoft Outlook ເຂົ້າກັບ ອີເມວໃໝ່ກະຊວງການເງິນ** .................................................... 7

1. ເປີດຄຳສັ່ງ Control panel ເພື່ອເຂົ້າໄປຕັ້ງຄ່າລະບົບ (ໃຊ້ເວລາທັງໝົດ ປະມານ 2 ນາທີ) ............................. 7

2. ຈາກນັ້ນໃຫ້ເລືອກຄຳວ່າ Mail (Microsoft Outlook) > Add..ປ້ອນຊື່ຜູ້ໃຊ້ງານ > OK .......................... 9

**III. ຂັ້ນຕອນການດຶງຂໍ້ມູນຈາກລະບົບອີເມວເກົ່າຂອງກະຊວງເຂົ້າໃນ Microsoft Outlook** ................................ 15

1. ເປີດຄຳສັ່ງ Control panel ເພື່ອເຂົ້າໄປຕັ້ງຄ່າລະບົບ (ໃຊ້ເວລາທັງໝົດ ປະມານ 2 ນາທີ) ເປີດຄຳສັ່ງ Control panel ເພື່ອເພີ່ມ Account Email ......................................................................... 15

2. ຈາກນັ້ນໃຫ້ເລືອກຄຳວ່າ Mail (Microsoft Outlook) > Add..ປ້ອນຊື່ຜູ້ໃຊ້ງານ > OK ......................... 15



<u>ຕິດຕໍ່ປະສານງານ</u>

1. ທ້າວ ຊາຍຍາ ເພັດນິອອນ ວິຊາການ ເບີໂທ: +856 20 78 956 646
2. ທ້າວ ສະຫວັດດີ ວິໄລແສງ ວິຊາການ ເບີໂທ: +856 20 22 457 772

# I. ການເຂົ້າໃຊ້ອີເມວຂອງກະຊວງດ້ວຍ Web Browser (https://mail.mof.gov.la)

## 1. ວິທີເປີດ Web Browser

ລະບົບເມວຂອງກະຊວງການເງິນ ສາມາດນຳໃຊ້ຜ່ານ Web Browser ເຊັ່ນ: Chrome, Firefox, Edge ແລະ ອື່ນໆ ດ້ວຍທີ່ຢູ່ https://mail.mof.gov.la ໃສ່ຊ່ອງ URL ຂອງ Web Browser ດັ່ງກ່າວ, ປ້ອນຊື່ອີເມວຂອງຕົນເອງ ແລະ ລະຫັດຜ່ານ **CFMailMof@2025!** ດັ່ງຮູບ ລຸ່ມນີ້:




ກໍລະນີທ່ານສາມາດເຂົ້າໃຊ້ລະບົບອີເມວດ້ວຍທີ່ຢູ່ອີເມວຂອງທ່ານ ແລະ ລະຫັດຂ້າງເທິງສຳເລັດ ກໍ່ຈະໄດ້ດັ່ງຮູບລຸ່ມນີ້



<u>ຕິດຕໍ່ປະສານງານ</u>

1. ທ້າວ ຊາຍຍາ ເພັດນິອອນ ວິຊາການ ເບີໂທ: +856 20 78 956 646
2. ທ້າວ ສະຫວັດດີ ວິໄລແສງ ວິຊາການ ເບີໂທ: +856 20 22 457 772




## 2. ການປ່ຽນລະຫັດຜ່ານ ໃຫ້ເປັນລະຫັດສ່ວນຕົວ ຂອງຕົນເອງ

ພາຍຫຼັງບັນດາທ່ານເຂົ້າໃຊ້ລະບົບອີເມວສຳເລັດແລ້ວ ໃຫ້ປ່ຽນລະຫັດທີ່ມາກັບລະບົບ **CFMailMof@2025!** ໃຫ້ເປັນລະຫັດເປັນຂອງຕົນເອງ ໂດຍໃຫ້ປະຕິບັດຕາມຂໍ້ບັງຄັບຂອງລະບົບ ເຊັ່ນ: ລະຫັດຕ້ອງປະກອບດ້ວຍຕົວອັກສອນໃຫຍ່-ນ້ອຍ, ອັກຄະລະພິເສດ (@,#,%,&,$...) ແລະ ຕົວເລກ, ລວມກັນຢ່າງໜ້ອຍຈຳນວນ 6 ຕົວຂຶ້ນໄປ (ຖ້າຖືກຕ້ອງຕາມເງື່ອນໄຂຈະສະແດງເຄື່ອງໝາຍຖືກສີຂຽວ ດັ່ງຕົວຢ່າງ ຮູບຂ້າງລຸ່ມ) ຂັ້ນຕອນການ ປ່ຽນລະຫັດຜ່ານມີດັ່ງລຸ່ມນີ້:






<u>ຕິດຕໍ່ປະສານງານ</u>

1. ທ້າວ ຊາຍຢາ ເພັດນິອອນ ວິຊາການ ເບີໂທ: +856 20 78 956 646
2. ທ້າວ ສະຫວັດດີ ວິໄລແສງ ວິຊາການ ເບີໂທ: +856 20 22 457 772

## 3. ອັບເດດຂໍ້ມູນສ່ວນຕົວ

ໃຫ້ກົດໄປທີ່ຄຳສັ່ງ Personal Information ຈາກນັ້ນ ໃຫ້ກົດ Edit ເພື່ອປ້ອນຂໍ້ມູນກ່ຽວຂ້ອງ ໃຫ້ຄົບຖ້ວນ, ແລ້ວກົດປຸ່ມ Save ເພື່ອບັນທຶກຂໍ້ມູນ ກໍ່ຈະໄດ້ຮູບ ດັ່ງລຸ່ມນີ້:




ພາຍຫຼັງອັບເດດຂໍ້ມູນສຳເລັດ, ລະບົບອີເມວໃໝ່ຈະແຈ້ງເຕືອນການເຂົ້າໃຊ້ຂໍ້ມູນຄັ້ງລ່າສຸດໃຫ້ຜູ້ດູແລລະບົບຂອງກົມເຕັກໂນໂລຂໍ້ມູນຂ່າວສານການເງິນໄດ້ຮັບຊາບ.



<u>ຕິດຕໍ່ປະສານງານ</u>

1. ທ້າວ ຊາຍຍາ ເພັດນິອອນ ວິຊາການ ເບີໂທ: +856 20 78 956 646
2. ທ້າວ ສະຫວັດດີ ວິໄລແສງ ວິຊາການ ເບີໂທ: +856 20 22 457 772

## II. ການເຊື່ອມ Microsoft Outlook ເຂົ້າກັບ ອີເມວໃໝ່ກະຊວງການເງິນ

### 1. ເປີດຄຳສັ່ງ Control panel ເພື່ອເຂົ້າໄປຕັ້ງຄ່າລະບົບ (ໃຊ້ເວລາທັງໝົດ ປະມານ 2 ນາທີ)






ຕິດຕໍ່ປະສານງານ

1. ທ້າວ ຊາຍຍາ ເພັດນີອອນ  ວິຊາການ ເບີໂທ: +856 20 78 956 646
2. ທ້າວ ສະຫວັດດີ ວິໄລແສງ ວິຊາການ ເບີໂທ: +856 20 22 457 772

ໃນກໍລະນີບໍ່ເຫັນຄຳສັ່ງ Mail (Microsoft Outlook) ໃນຂັ້ນຕອນເລກ 1 ໃຫ້ທ່ານພິມຄຳວ່າ Mail ເພື່ອຄົ້ນຫາຄຳສັ່ງດັ່ງກ່າວ.







ຕິດຕໍ່ປະສານງານ

1. ທ້າວ ຊາຍຍາ ເພັດນີອອນ ວິຊາການ ເບີໂທ: +856 20 78 956 646
2. ທ້າວ ສະຫວັດດີ ວິໄລແສງ ວິຊາການ ເບີໂທ: +856 20 22 457 772

2. ຈາກນັ້ນໃຫ້ເລືອກຄຳວ່າ **Mail (Microsoft Outlook) > Add..ປ້ອນຊື່ຜູ້ໃຊ້ງານ > OK**




ໃຫ້ເລືອກ **"Manual setup or additional server types"** ແລ້ວກົດ **"Next"**




ເລືອກ **"POP or IMAP"** ແລ້ວກົດ **"Next"**






<u>ຕິດຕໍ່ປະສານງານ</u>

1. ທ້າວ ຊາຍຍາ ເພັດນິອອນ ວິຊາການ ເບີໂທ: +856 20 78 956 646
2. ທ້າວ ສະຫວັດດີ ວິໄລແສງ ວິຊາການ ເບີໂທ: +856 20 22 457 772

ປ້ອນຂໍ້ມູນ Your Name/Email Address ເປັນຊື່ ຂອງຕົນເອງ ແລະ ເມວຂອງຕົນເອງ, ສ່ວນ Incoming mail server / Outgoing mail server (SMTP) ແມ່ນໃຫ້ປ້ອນ mail.mof.gov.la ສ່ວນ User Name/Password ແມ່ນໃຫ້ໃສ່ອີເມວ ແລະ ລະຫັດໃໝ່ຕົນເອງ ແລ້ວກົດ More settings…




ກົດ Tab Outgoing Server ກົດເລືອກ My outgoing server (SMTP) requires authentication > Logon using ປ້ອນອີເມວ ແລະ ລະຫັດ ໃໝ່ ຕົນເອງ ແລ້ວ ກົດ Tab Advanced



ຕິດຕໍ່ປະສານງານ

1. ທ້າວ ຊາຍຍາ ເພັດນິອອນ ວິຊາການ ເບີໂທ: +856 20 78 956 646
2. ທ້າວ ສະຫວັດດີ ວິໄລແສງ ວິຊາການ ເບີໂທ: +856 20 22 457 772

ປ້ອນຂໍ້ມູນຕາມຮູບແລ້ວກົດ OK







ການຕິກ Leave a copy message on the serve ອອກ ແມ່ນເພື່ອໃຫ້ດຶງອີເມວທັງໝົດ ຈາກເຊີເວີ ມາໄວ້ຢູ່ Outlook ຂອງເຄື່ອງຕົນເອງ



<u>ຕິດຕໍ່ປະສານງານ</u>

1. ທ້າວ ຊາຍຍາ ເພັດນິອອນ  ວິຊາການ ເບີໂທ: +856 20 78 956 646
2. ທ້າວ ສະຫວັດດີ ວິໄລແສງ ວິຊາການ ເບີໂທ: +856 20 22 457 772

ພາຍຫຼັງປ້ອນຂໍ້ມູນສໍາລັດໃຫ້ ກົດ Next >






ຕິດຕໍ່ປະສານງານ

1. ທ້າວ ຊາຍຍາ ເພັດນີອອນ ວິຊາການ ເບີໂທ: +856 20 78 956 646
2. ທ້າວ ສະຫວັດດີ ວິໄລແສງ ວິຊາການ ເບີໂທ: +856 20 22 457 772

ແລ້ວລໍຖ້າຜົນປະມວນ ຫລັງຈາກປະມວນແລ້ວ, ໃຫ້ກົດ “Close”




ແລ້ວຈະປະກົດໜ້າຈໍນີ້ຂຶ້ນມາ, ຖືວ່າດໍາເນີນການສໍາເລັດ ແລ້ວກົດ Finish.









<u>ຕິດຕໍ່ປະສານງານ</u>

1. ທ້າວ ຊາຍຍາ ເພັດນີອອນ ວິຊາການ ເບີໂທ: +856 20 78 956 646
2. ທ້າວ ສະຫວັດດີ ວິໄລແສງ ວິຊາການ ເບີໂທ: +856 20 22 457 772

ກົດ  ຢູ່ຄີບອດ ແລ້ວພິມຄຳວ່າ Outlook ເພື່ອຊອກຫາ Microsoft Outlook ແລ້ວກົດເລືອກ outlook










ການຕັ້ງຄ່າດັ່ງກ່າວ ແມ່ນດຳເນີນພຽງຄັ້ງດຽວ ສ່ວນຄັ້ງຖັດໄປ ຜູ້ນຳໃຊ້ອີເມວ ສາມາດເປີດເຂົ້າໃຊ້ Microsoft Outlook ໄດ້ເລີຍ ບໍ່ຈຳເປັນຕ້ອງ ເປີດຜ່ານ Browser ເພື່ອປ້ອນຊື່ຜູ້ໃຊ້ ແລະ ລະຫັດຜ່ານ ໃໝ່ທຸກຄັ້ງ.



<u>ຕິດຕໍ່ປະສານງານ</u>

1. ທ້າວ ຊາຍຍາ ເພັດນິອອນ ວິຊາການ ເບີໂທ: +856 20 78 956 646
2. ທ້າວ ສະຫວັດດີ ວິໄລແສງ ວິຊາການ ເບີໂທ: +856 20 22 457 772

# III. ຂັ້ນຕອນການດຶງຂໍ້ມູນຈາກລະບົບອີເມວເກົ່າຂອງກະຊວງເຂົ້າໃນ Microsoft Outlook

1. ເປີດຄຳສັ່ງ Control panel ເພື່ອເຂົ້າໄປຕັ້ງຄ່າລະບົບ (ໃຊ້ເວລາທັງໝົດ ປະມານ 2 ນາທີ) ເປີດຄຳສັ່ງ Control panel ເພື່ອເພີ່ມ Account Email

2. ຈາກນັ້ນໃຫ້ເລືອກຄຳວ່າ  Mail (Microsoft Outlook)  > Add..ປ້ອນຊື່ຜູ້ໃຊ້ງານ > OK






<u>ຕິດຕໍ່ປະສານງານ</u>

1. ທ້າວ ຊາຍຍາ ເພັດນິອອນ  ວິຊາການ ເບີໂທ: +856 20 78 956 646
2. ທ້າວ ສະຫວັດດີ ວິໄລແສງ ວິຊາການ ເບີໂທ: +856 20 22 457 772

ປ້ອນຂໍ້ມູນ Your Name/Email Address ເປັນຊື່ ຂອງຕົນເອງ ແລະ ເມວຂອງຕົນເອງ, ສ່ວນ Incoming mail




server / Outgoing mail server (SMTP) ແມ່ນໃຫ້ປ້ອນ ***mailold.mof.gov.la*** ສ່ວນ User Name/Password ແມ່ນໃຫ້ໃສ່ອີເມວ ແລະ ລະຫັດລະບົບອີເມວເກົ່າຕົນເອງ ແລ້ວກົດ More settings…






<u>ຕິດຕໍ່ປະສານງານ</u>

1. ທ້າວ ຊາຍຍາ ເພັດນິອອນ ວິຊາການ ເບີໂທ: +856 20 78 956 646
2. ທ້າວ ສະຫວັດດີ ວິໄລແສງ ວິຊາການ ເບີໂທ: +856 20 22 457 772

ກົດ Tab Outgoing Server ກົດເລືອກ My outgoing server (SMTP) requires authentication > Logon using ປ້ອນອີເມວ ແລະ ລະຫັດເກົ່າ ຕົນເອງ ແລ້ວ ກົດ Tab Advanced ປ້ອນຂໍ້ມູນຕາມຮູບແລ້ວກົດ OK







ການຕິກ Leave a copy message on the serve ອອກ ແມ່ນເພື່ອໃຫ້ດຶງອີເມວທັງໝົດ ຈາກເຊີເວີ ມາໄວ້ຢູ່ Outlook ຂອງເຄື່ອງຕົນເອງ



<u>ຕິດຕໍ່ປະສານງານ</u>

1. ທ້າວ ຊາຍຢາ ເພັດນິອອນ ວິຊາການ ເບີໂທ: +856 20 78 956 646
2. ທ້າວ ສະຫວັດດີ ວິໄລແສງ ວິຊາການ ເບີໂທ: +856 20 22 457 772

ພາຍຫຼັງປ້ອນຂໍ້ມູນສຳລັດໃຫ້ ກົດ Next >






ຕິດຕໍ່ປະສານງານ

1. ທ້າວ ຊາຍຍາ ເພັດນິອອນ ວິຊາການ ເບີໂທ: +856 20 78 956 646
2. ທ້າວ ສະຫວັດດີ ວິໄລແສງ ວິຊາການ ເບີໂທ: +856 20 22 457 772

ແລ້ວລໍຖ້າຜົນປະມວນ ຫລັງຈາກປະມວນແລ້ວ, ໃຫ້ກົດ “Close”




ແລ້ວຈະປະກົດຫນ້າຈໍນີ້ຂຶ້ນມາ, ຖືວ່າດຳເນີນການສຳເລັດ ແລ້ວກົດ Finish.









ຕິດຕໍ່ປະສານງານ

1. ທ້າວ ຊາຍຍາ ເພັດນີອອນ ວິຊາການ ເບີໂທ: +856 20 78 956 646
2. ທ້າວ ສະຫວັດດີ ວິໄລແສງ ວິຊາການ ເບີໂທ: +856 20 22 457 772

ກົດ  ຢູ່ຄີບອດ ແລ້ວພິມຄຳວ່າ Outlook ແລ້ວກົດເລືອກ outlook







# ສຳເລັດ



ຕິດຕໍ່ປະສານງານ

1. ທ້າວ ຊາຍຍາ ເພັດນິອອນ ວິຊາການ ເບີໂທ: +856 20 78 956 646
2. ທ້າວ ສະຫວັດດີ ວິໄລແສງ ວິຊາການ ເບີໂທ: +856 20 22 457 772